ຫ້ອງການ Office for Civil Rights (OCR) ບັງຄັບໃຊ້ກົດໝາຍຂອງລັດຖະບານກາງຫລາຍສະບັບວ່າດ້ວຍສິດທິຂອງປະຊາຊົນທີ່ຫ້າມບໍ່ໃຫ້ມີການເລືອກປະຕິບັດເກີດຂຶ້ນໃນໂຄງການຫລືກິຈກັມຕ່າງໆ ທີ່ໄດ້ຮັບຄວາມຊ່ວຍເຫລືອທາງດ້ານການເງິນຈາກກະຊວງສຶກສາທິການ (ED) ຂອງລັດຖະບານກາງ. ພາກ Title VI ຂອງກ.ມ. Civil Rights Act of 1964 ຫ້າມການເລືອກປະຕິບັດໂດຍອີງໃສ່ເຊື້ອຊາດ, ສີສັນ ແລະສັນຊາດເດີມ; ພາກ Title IX ຂອງ Education Amendments of 1972 ຫ້າມການເລືອກປະຕິບັດໂດຍອີງໃສ່ເພດ; ມີການຫ້າມການເລືອກປະຕິບັດໂດຍອີງໃສ່ຄວາມພິການໂດຍໝວດ 504 ຂອງກ.ມ. Rehabilitation Act of 1973 ແລະພາກ Title II ຂອງກ.ມ. Americans with Disabilities Act of 1990 (Title II ບໍ່ໃຫ້ໜ່ວຍງານຂອງຝ່າຍສາທາລະນະເລືອກປະຕິບັດໂດຍອີງໃສ່ຄວາມພິການ, ບໍ່ວ່າເພິ່ນໄດ້ຮັບຄວາມຊ່ວຍເຫລືອທາງດ້ານການເງິນຈາກລັດຖະບານກາງຫລືບໍ່ກໍຕາມ); ແລະກ.ມ. Age Discrimination Act of 1975 ຫ້າມການເລືອກປະຕິບັດໂດຍອີງໃສ່ອາຍຸ.

ກົດໝາຍທັງຫລາຍວ່າດ້ວຍສິດທິຂອງປໍຊາຊົນ ເຊິ່ງມີ OCR ເປັນຜູ້ໃຊ້ບັງຄັບມີອຳນາດໄປເຖິງໜ່ວຍງານສຶກສາທິການຂອງລັດທັງໝົດ, ລະບົບການສຶກສາຊັ້ນປະຖົມແລະມັທຍົມ, ວິທຍາລັຍແລະມະຫາວິທຍາລັຍ, ໂຮງຮຽນອາຊີວະ, ໂຮງຮຽນຂອງເອກະຊົນ, ໜ່ວຍງານຟື້ນຟູທາງອາຊີວະສຶກສາຂອງລັດ, ຫ້ອງສະມຸດແລະພິພິທະພັນທີ່ໄດ້ຮັບເງິນຊ່ວຍເຫລືອຂອງລັດຖະບານກາງຈາກ ED. ໂຄງການແລະກິຈກັມຕ່າງໆ ທີ່ໄດ້ຮັບທຶນຈາກ ED ຈະຕ້ອງໃຫ້ສິ່ງຊ່ວຍເຫລືອ, ສິດທິປະໂຍດ ຫລືການບໍລິການຢ່າງປາສຈາກການເລືອກປະຕິບັດ. ສິ່ງຊ່ວຍເຫລືອ, ສິດທິປະໂຍດ ຫລືການບໍລິການດັ່ງກ່າວອາດຮວມເຖິງ, ແຕ່ບໍ່ຈຳກັດເຖິງ: ການຮັບຜູ້ສມັກ, ການຫາພະນັກງານ, ການຊ່ວຍເຫລືອທາງດ້ານການເງິນ, ກຳໜົດການວິທຍາການ, ການຮັກສາແລະບໍລິການນັກຮຽນ, ການປຶກສາແນະນຳ, ການບັງຄັບວິນັຍ, ການມອບໝາຍວຽກການໃນຫ້ອງຮຽນ, ການໃຫ້ຄະແນນ, ການອາຊີວະສຶກສາ, ການພັກຜ່ອນຢ່ອນໃຈ, ການພະລະສຶກສາ, ການຫລິ້ນກິລາ, ການຈັດຫາທີ່ພັກແລະການວ່າຈ້າງ.

ລັນນີ້ງ ເລີ່ມຕັ້ງແຕ່ວັນທີ 8 ມົກກະລາ 2002, OCR ໃຊ້ບັງຄັບກ.ມ. Boy Scouts of America Equal Access Act, ເຊິ່ງເປັນສ່ວນຂອງກ.ມ. No Child Left Behind Act of 2001. ຕາມກ.ມ. Boy Scouts of America Equal Access Act, ມີການຫ້າມບໍ່ໃຫ້ໂຮງຮຽນຊັ້ນປະຖົມສາທາລະນະ, ໂຮງຮຽນຊັ້ນມັທຍົມສາທາລະນະ, ຫລືໜ່ວຍງານສຶກສາທິການຂອງລັດຖຫລືທ້ອງຖິ່ນ ທີ່ມອບໂອກາດໃຫ້ແກ່ຍຸວະຊົນນຶ່ງຫລືຫລາຍຄົນຫລືກຸ່ມໃດໆ ໃນຊຸມຊົນທີ່ຈະມາຮ່ວມກັນໃນສະຖານທີ່ຕ່າງໆ ຂອງໂຮງຮຽນກ່ອນຫລືຫລັງເວລາຮຽນປະຕິເສດບໍ່ໃຫ້ເຂົ້າມາຢ່າງສເມີພາກຫລືໄດ້ຮັບໂອກາດຢ່າງຊອບດ້ວຍທັມທີ່ຈະເຂົ້າມາຮ່ວມກັນງ ຫລືໃຊ້ການເລືອກປະຕິບັດຕໍ່ກຸ່ມໃດໆ ທີ່ມີຄວາມສັມພັນຢ່າງເປັນທາງການກັບລູກເສືອແຫ່ງອາເມລິກາ ຫລືກຸ່ມຍຸວະຊົນໃດໆ ທີ່ລະບຸໃນພາກ Title 36 ຂອງກ.ມ. United States Code ໂດຍເປັນສະມາຄົມຜູ້ຮັກຊາດ.



## ສິ່ງທີ່ຄວນເຮັດ

ບຸກຄົນໃດໆ ທີ່ຕ້ອງການຍື່ນຄຳຮ້ອງທຸກຕໍ່ OCR ຢ່າງເປັນທາງການຄວນມອບລາຍລະອຽດຕໍ່ໄປນີ້ເປັນລາຍລັກອັກສອນໂດຍຂຽນຈົດໝາຍຫລືໃຊ້ເຈັຽຟອມ Discrimination Complaint Form ເຊິ່ງສາມາຫາໄດ້ຈາກຫ້ອງການການໃຊ້ກົດໝາຍບ່ອນໃດບ່ອນນຶ່ງຂອງ OCR (ໃຫ້ເບິ່ງລາຍການ):

- ຊື່ແລະບ່ອນຢູ່ຂອງທ່ານ (ເບີໂທລະສັບທີ່ສາມາດຕິດຕໍ່ກັບທ່ານໄດ້ພາຍໃນເວລາເຮັດການຈະເປັນປໂຍດ, ແຕ່ບໍ່ຈຳເປັນ);
- ການບອກລັກສະນະໂດຍທົ່ວໄປຂອງບຸກຄົນຫລືກຸ່ມບຸກຄົນທີ່ໄດ້ຮັບຄວາມເສັຽຫາຍຈາກການເລືອກປະຕິບັດທີ່ກຳລັງກ່າວຫາວ່າໄດ້ເກີດຂຶ້ນ (ບໍ່ຈຳເປັນຕ້ອງແຈ້ງຊື່ຂອງຜູ້ທີ່ໄດ້ຮັບຄວາມເສັຽຫາຍກໍໄດ້);
- ຊື່ແລະບ່ອນທີ່ຕັ້ງຂອງສະຖາບັນທີ່ກ່າວຫາວ່າໄດ້ກະທຳການເລືອກປະຕິບັດ; ແລະ
- ຄຳອະທິບາຍເຖິງການເລືອກປະຕິບັດທີ່ກ່າວຫາວ່າໄດ້ເກີດຂຶ້ນ ໂດຍມອບລາຍລະອຽດທີ່ພຽງພໍເພື່ອຊ່ວຍໃຫ້ OCR ມີຄວາມເຂົ້າໃຈໃນສິ່ງທີ່ໄດ້ເກີດຂຶ້ນ, ເກີດຂຶ້ນເມື່ອໃດ, ແລະເຫດຜົນທີ່ໃຊ້ການເລືອກປະຕິບັດທີ່ກ່າວຫາ (ເຊື້ອຊາດ, ສີສັນ, ສັນຊາດເດີມ, ເພດ, ຄວາມພິການ, ອາຍຸ, ຫລືກ.ມ. Boy Scouts of America Equal Access Act).



## ວິທີຍື່ນຄຳຮ້ອງທຸກໂດຍຜ່ານລະບົບຄອມພິວເຕີ້

OCR ຂໍແນະນຳໃຫ້ນັກຮຽນແລະພໍ່ແມ່ນັກຮຽນ, ເຈົ້າພະນັກງານຂອງສະຖາບັນການສຶກສາ, ແລະລູກຄ້າອື່ນໆຂອງ OCR ໃຊ້ອີ-ເມລ໌ຫລືໂທລະສານໃນການຕິດຕໍ່ສື່ສານກັບ OCR, ທຸກໆ ເທື່ອທີ່ສາມາດທຳໄດ້. ອັນນຶ່ງ, ຜູ້ຮ້ອງທຸກອາດຍື່ນຄຳຮ້ອງທຸກຕໍ່ OCR ໄດ້, **ໂດຍຜ່ານລະບົບຄອມພິວເຕີ້**, ຕາມເວັບໄຊທ໌ຕໍ່ໄປນີ້:

http://www.ed.gov/ocr/complaintprocess.html.

ສຳຫລັບຜູ້ທີ່ບໍ່ມີບັນຊີອີ-ເມລ໌ໃນປັດຈຸບັນ, ຈະສາມາດເຂົ້າເຖິງອິນເຕີເນັດໄດ້ຢ່າງເສລີຈາກຫ້ອງສະມຸດປະຈຳທ້ອງຖິ່ນຂອງທ່ານ, ແລະບັນຊີອີ-ເມລ໌ໂດຍບໍ່ມີການຄິດຄ່າບໍລິການຈາກຜູ້ໃຫ້ການບໍລິການອິນເຕີເນດລາຍໃຫຍ່ຫລາຍລາຍ.

ຫ້າມຜູ້ຮັບໄດ້ກະທຳການແກ້ເຜັດຕໍ່ບຸກຄົນໃດໆ ທີ່ໄດ້ຍື່ນຄຳຮ້ອງທຸກ, ໄດ້ໃຫ້ການເປັນພິຍານ, ຊ່ວຍເຫລືອ ຫລືເຂົ້າມີບົດບາດໃນລູບແບບໃດກໍໄດ້ໃນການສອບສວນຫລືການດຳເນີນຄະດີຕາມກົດໝາຍທີ່ລະບຸຂ້າງຕົ້ນນີ້.



# ວິທີຍື່ນ
# ຄຳຮ້ອງທຸກ
# ກ່ຽວກັບການເລືອກປະຕິບັດ
# ຕໍ່
# ຫ້ອງການປ້ອງກັນສິດທິຂອງປະຊາຊົນ

Office for Civil Rights
U.S. Department of Education
400 Maryland Avenue, S.W.
Washington, D.C. 20202-1100
(202) 245-6800; 1-800-421-3481
FAX: (202) 245-6840 TDD: (877) 521-2172
E-mail: OCR@ed.gov
Web: http://www.ed.gov/ocr

## ແມ່ນໃຜແດ່ທີ່ສາມາດຍື່ນໄດ້

ຜູ້ໃດໆ ທີ່ເຊື່ອວ່າ ສະຖາບັນການສຶກສາໃດໆ ທີ່ໄດ້ຮັບຄວາມຊ່ວຍເຫລືອທາງດ້ານການເງິນຈາກລັດຖະບານກາງ ໄດ້ກະທຳການເລືອກປະຕິບັດຕໍ່ຜູ້ໃດໂດຍອີງໃສ່ເຊື້ອຊາດ, ສີສັນ, ສັນຊາດເດີມ, ເພດ, ຄວາມພິການ ຫລືອາຍຸ, ຫລືທີ່ເຊື່ອວ່າໂຮງຮຽນສາທາລະນະຊັ້ນປະຖົມຫລືຊັ້ນມັທຍົມ, ຫລືໜ່ວຍງານສຶກສາທິການໃດໆ ຂອງມົນລັດຖຫລືທ້ອງຖິ່ນໄດ້ລະເມີດກົດໝາຍ Boy Scouts of America Equal Access Act, ອາດຍື່ນຄຳຮ້ອງທຸກໄດ້. ບຸກຄົນຫລືອົງການທີ່ຍື່ນຄຳຮ້ອງທຸກບໍ່ຈຳເປັນຕ້ອງເປັນຜູ້ຮັບເຄາະຈາກການເລືອກປະຕິບັດທີ່ກ່າວອ້າງ, ແຕ່ສາມາດຍື່ນຄຳຮ້ອງທຸກໃນນາມຂອງບຸກຄົນອີກຄົນນຶ່ງຫລືກຸ່ມບຸກຄົນໄດ້.

## ການເຮັດໃຫ້ທັນເວລາ

ຈະຕ້ອງຍື່ນຄຳຮ້ອງທຸກພາຍໃນ 180 ວັນປະຕິທິນນັບຕັ້ງແຕ່ວັນທີທີ່ການເລືອກປະຕິບັດທີ່ກ່າວອ້າງໄດ້ເກີດຂຶ້ນ, ຍົກເວັ້ນໃນກໍລະນີທີ່ OCR ໄດ້ຕໍ່ເວລາທີ່ກຳໜົດໃຫ້ຍື່ນຄຳຮ້ອງທຸກໄດ້ໂດຍມີເຫດຜົນອັນສົມຄວນ.

## ກະບວນການຮ້ອງທຸກຂອງສະຖານບັນ

ກ່ອນທີ່ຈະຍື່ນຄຳຮ້ອງທຸກຕໍ່ OCR ເປັນການຕໍ່ຕ້ານສະຖາບັນໃດໆ, ຜູ້ທີ່ອາດຮ້ອງທຸກໄດ້ ຄວນຮຽນຮູ້ກ່ຽວກັບກະບວນການຮ້ອງທຸກຂອງສະຖານບັນນັ້ນ ແລະໃຊ້ກະບວນການນັ້ນເພື່ອໃຫ້ແກ້ຄຳຮ້ອງຂໍ. ກົດໝາຍບໍ່ໄດ້ບັງຄັບໃຫ້ຜູ້ຮ້ອງທຸກຈຳຕ້ອງໃຊ້ກະບວນການຮ້ອງທຸກຂອງສະຖາບັນນັ້ນກ່ອນທີ່ຈະຍື່ນຄຳຮ້ອງທຸກຕໍ່ OCR ກໍໄດ້. ຫາກຜູ້ຮ້ອງທຸກໃຊ້ກະບວນການຮ້ອງທຸກຂອງສະຖາບັນ ແລະຍັງຕັດສິນໃຈຍື່ນຄຳຮ້ອງທຸກຕໍ່ OCR, ຈະຕ້ອງນຳຄຳຮ້ອງທຸກໄປຍື່ນຕໍ່ OCR ພາຍໃນ 60 ວັນນັບຕັ້ງແຕ່ໄດ້ກະທຳຂັ້ນຕອນສຸດທ້າຍຂອງກະບວນການຮ້ອງທຸກຂອງສະຖາບັນ.



## ຈະຂຽນຈົດໝາຍໄປຍັງບ່ອນໃດ

### ພາກຕະວັນອອກ

**ຄອນເນກທິຄັດ, ເມນ, ມັດຊາຊູເສດສ໌,**
**ນິວແຫມເຊີ, ໂຣດ1 ໄອແລນດ໌, ເວີມອນຕ໌**
Office for Civil Rights, Boston Office
U.S. Department of Education
33 Arch Street, Suite 900
Boston, MA 02110
Tel.: (617) 289-0111; Fax: (617) 289-0150

**ນິວເຈີເຊຍ໌, ນິວ ຢອຣ໌ກ, ປອຣໂຕ ຣີໂກ,**
**ເວີຈິນ ໄອແລນດ໌**
Office for Civil Rights, New York Office
U.S. Department of Education
32 Old Slip
26th Floor
New York, NY 10005
Tel.: (646) 428-3900; Fax: (646) 428-3890

**ດເລາແວຣ໌, ເມຣີແລນດ໌, ເຄນທັກກີ,**
**ເພຊິລເວເນັຽ, ເວສ໌ຕ ເວີຈີເນັຽ**
Office for Civil Rights, Philadelphia Office
U.S. Department of Education
The Wanamaker Building
100 Penn Square East, Suite 515
Philadelphia, PA 19107
Tel.: (215) 656-8541; Fax: (215) 656-8605

### ພາກໃຕ້

**ອາລາບາມາ, ຟລໍຣິດ້າ, ຈໍເຈັຽ, ເທນເນສ໌ຊີ**
Office for Civil Rights, Atlanta Office
U.S. Department of Education
61 Forsyth Street S.W., Suite 19T70
Atlanta, GA 30303
Tel.:(404) 562-6350; Fax:( 404) 562-6455



**ອາຣ໌ເຄນສໍສ໌, ລູອີເຊັຽນາ, ມິດຊີຊິບປີ,**
**ເທັກຊັສ**
Office for Civil Rights, Dallas Office
U.S. Department of Education
1999 Bryan Street, Suite 1620
Dallas, TX 75201
Tel.:(214) 661-9600; Fax: (214) 661-9587

**ນອຣ໌ຕ ແຄໂຣໄລນາ, ເວີຈີເນັຽ,**
**ວໍຊິງຕັນ ດີ ຊີ, ເຊົາຕ໌ ແຄໂຣໄລນາ**
Office for Civil Rights, DC Office
U.S. Department of Education
P.O. Box 14620
Washington, D.C. 20044
Tel.:(202) 208-2545; Fax: (202) 208-7797

### ພາກສະວັນຕົກກາງ

**ອິນລີນອຍສ໌, ອິນດັຽນາ, ມິນເນໂຊຕາ, ວິສຄອນຊິນ, ໄອໂອວາ,**
**ນອດ ດາໂກຕາ**
Office for Civil Rights, Chicago Office
U.S. Department of Education
111 North Canal Street, Suite 1053
Chicago, IL 60606
Tel.:(312) 886-8434; Fax: (312) 353-4888

**ມີຊິແກນ, ໂອໄຮໂອ**
Office for Civil Rights, Cleveland Office
U.S. Department of Education
600 Superior Avenue East, Suite 750
Cleveland, OH 44114
Tel.: (216) 522-4970; Fax: (216) 522-2573



**ແຄນສຊັສ, ມີສຊູຣີ, ເນບຼັສກາ,**
**ເຊົາຕ໌ ດາໂກຕາ, ໂອຄລາໂຮມາ**
Office for Civil Rights, Kansas City Office
U.S. Department of Education
8930 Ward Parkway, Suite 2037
Kansas City, MO 64114
Tel.:(816) 268-0550; Fax: (816) 823-1404

### ພາກຕະວັນຕົກ

**ອາຣີໂຊນາ, ໂຄໂລຣາໂດ, ນິວ ເມັກຊີໂກ, ຢູຕາຫ໌, ໄວໂອມິງ**
Office for Civil Rights, Denver Office
U.S. Department of Education
1244 Speer Boulevard
Federal Building, Suite 310
Denver, CO 80204
Tel.:(303) 844-5695; Fax: (303) 844-4303

**ແຄລີຟໍເນັຽ**
Office for Civil Rights, San Francisco Office
U.S. Department of Education
Old Federal Building
50 United Nations Plaza, Room 239
San Francisco, CA 94102
Tel.:(415) 556-4275; Fax: (415) 437-7783

**ອະລາສກາ, ຮາວາຍ, ໄອດາໂຮ,ເນວາດາ, ອໍເລກອນ, ວໍຊິງຕັນ,**
**ມອນຕານາ, ອາເມລິກັນ ຊາມົວ, ກວັມ**
**ແລະໝູ່ເກາະມອຣ໌ເທີນ ມາຣີໂອນາ**
Office for Civil Rights, Seattle Office
U.S. Department of Education
915 Second Avenue, Room 3310
Seattle, WA 98174
Tel.:(206) 220-7900; Fax: (206) 220-7887

**ສະບັບແກ້ໄຂ ກັນຍາ 2005**